ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 009 /ທຄຕລ...ສພບ.......
ນະຄອນຫຼວງວຽງຈັນ, ວັນທີ:...22...ມີນາ..2024...

# ມະຕິ

## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝວິສາມັນ

## ຄັ້ງທີ 1 ປະຈຳປີ 2024, ວັນທີ 22/03/2024

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນຄັ້ງທີ 1 ປະຈຳປີ 2024 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 13:30 – 16:00 ໂມງ ວັນທີ 22 ມີນາ 2024 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ບຸນປອນ ວັນນະຈິດ ປະທານສະພາບໍລິຫານ, ມີສະມາຊິກສະພາບໍລິຫານເຂົ້າຮ່ວມ 08 ທ່ານ, ມີຄະນະອຳນວຍການ ແລະ ພະແນກທີ່ກ່ຽວຂ້ອງເຂົ້າຮ່ວມເປັນຜູ້ສັງເກດການ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1. ຮັບຮອງການກູ້ຢືມເງິນຂອງລູກຄ້າທີ່ຂຶ້ນກັບສິດອຳນາດຂອງສະພາບໍລິຫານ 03 ລາຍການ;
2. ຮັບຮອງຜົນດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2023 ທີ່ຜ່ານການກວດສອບໂດຍຜູ້ກວດສອບອິດສະຫລະ ເພື່ອນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
3. ຮັບຮອງແຜນການປະຈຳປີ 2024 ເພື່ອນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
4. ຮັບຮອງການຈັດສັນກຳໄລສຸດທິປະຈຳປີ 2023 ເຂົ້າຄັງຕ່າງໆ ແລະ ເງິນປັນຜົນ ເພື່ອນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
5. ຮັບຮອງການຈ່າຍເງິນປັນຜົນປະຈຳປີ 2023;
   - ຈຳນວນເງິນປັນຜົນ/ຮຸ້ນ: 300 ກີບ/ຮຸ້ນ
   - ມື້ປິດປຶ້ມກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ: 26/04/2024
   - ມື້ຈ່າຍເງິນປັນຜົນ: 14/05/2024
6. ຮັບຮອງແຜນການແກ້ໄຂອັດຕາຄວາມພຽງພໍຂອງທຶນ;
7. ຮັບຮອງການແຕ່ງຕັ້ງ ແລະ ສັບຊ້ອນພະນັກງານຈຳນວນໜຶ່ງ.

**ປະທານສະພາບໍລິຫານ**

**ບຸນປອນ ວັນນະຈິດ**